# ສົ່ງເສີມໄວໜຸ່ມໃຫ້ເຂົ້າໃຈກ່ຽວກັບສູຂະພາບທາງເພດ ແລະ ບັນທັດຖານທາງດ້ານບົດບາດຍິງຊາຍຜ່ານສື່ແບບສ້າງສັນ (Education Entertainment )




| ID: | Author: | Organization: | Created date: |
|---|---|---|---|
| 96 | RDA | RDA | 2020-10-22 00:00:00 |

## 1. ກ່ຽວກັບສະພາບບັນຫາທີ່ໂຄງການຢາກຈະແກ້ໄຂ / About the problem that project want to solve.

ສະພາບສັງຄົມໃນປະຈູບັນມີຫຼາຍບັນຫາທີ່ເກີດຂຶ້ນໂດຍສະເພາະແມ່ນບັນຫາຂອງໄວໜູ່ມທາງດ້ານສູຂະພາບທາງເພດ ແລະ ບັນທັດຖານທາງດ້ານບົດບາດຍິງຊາຍ ຕາມທີ່ໄດ້ຍິນຂ່າວຜ່ານທາງສື່ອອນລາຍ ແລະ ໄດ້ປະເສີນຕົວຈິງໃນຂົງເຂດເປົ້າໝາຍ. ດັ່ງນັ້ນ, ເພື່ອສົ່ງເສີມໃຫ້ໄວໜູ່ມຮູ້ເຖິງບັນຫາທີ່ຈະເກີດຂຶ້ນ ແລະ ເມື່ອເກີດຂຶ້ນແລ້ວໃຫ້ພວກເຂົາສາມາດຮັບມື ແລະ ຮູ້ຊອກທາງແກ້ໄຂໄດ້. ທາງໂຄງການຈຶ່ງສ້າງໂຄງນີ້ຂຶ້ນມາເພື່ອໃຫ້ໄວໜູ່ມຮູ້ເທົ່າທັນບັນຫາທີ່ຈະເກີດຂຶ້ນ.

## 2. ໂຄງການໄດ້ເຮັດຫຍັງແດ່ເພື່ອແກ້ໄຂບັນຫາ / About how the project solve the problems

- ກິດຈະກຳທີ1: ເຮັດບົດຄົ້ນຄວ້າວິໄຈຮ່ວມກັບພາກວິຊາວິທະຍາສາດສັງຄົມ, ພາກວິຊາສັງຄົມສົງເຄາະ ແລະ ການພັດທະນາ ໃນຫົວຂໍ້ ການຮັບຮູ້, ທັດສະນະຄະຕິ ແລະ ການປະພຶດ ຂອງໄວໜຸ່ມທາງດ້ານສູຂະພາບທາງເພດ ແລະ ບັນທັດຖານທາງດ້ານບົດບາດຍິງຊາຍ.
- ກິດຈະກຳທີ2: ແມ່ນເປີດໂອກາດໃຫ້ໄວໜຸ່ມໃນເຂດຊົນນະບົດທີ່ມັກ,ຮັກໃນການຜະລິດຮູບເງົາສັ້ນ (ເອີ້ນວ່າອຸດສາຫະກຳໜັງ ) ເຂົ້າມາຝຶກອົບຮົມທຸກຂະບວນການຜະລິດຮູບເງົາສັ້ນເປັນໄລຍະເວລາ 1ປີ ເລີ່ມເດືອນ 9/2019 – 10/2020,  ນອກຈາກນັ້ນໂຄງການຍັງຝຶກທັກສະເສີມໃຫ້ພວກເຂົາເຈົ້າເຊັ່ນ: ພາວະຄວາມເປັນຜູ້ນຳ,ພະລັງກຸ່ມ, ບົດບາດຍິງ-ຊາຍ, ສຸຂະພາບຈະເລີນພັນ,ຄວາມຫຼາກຫຼາຍ ແລະ ສຸຂະພາບຈະເລີນພັນ, ການເປັນຜູ້ອຳນວຍຄວາມສະດວກໃນການໃຫ້ຄຳປຶກສາ, ການຜະລິດສື່

ເພື່ອການພັດທະນາ, ຈິດອາສາ, ການຂຽນບົດລະຄອນ ແລະ ອື່ນໆອີກຫຼາຍຫົວຂໍ້.
- ກິດຈະກຳທີ3: ແມ່ນການຜະລິດຮູບເງົາຊີຣີທີ່ມີຊື່ວ່າ "ເຮົາ House the series" ທັງໝົດ 8ຕອນ ເຊິ່ງແຕ່ລະຕອນມີເນື້ອໃນແຕກຕ່າງກັນ ກ່ຽວກັບສຸຂະພາບທາງເພດ ແລະ ບັນທັດຖານທາງດ້ານບົດບາດຍິງ-ຊາຍ ຫຼື ເວົ້າອີກຢ່າງໜຶ່ງແມ່ນບັນຫາທີ່ໄວໜຸ່ມປະເຊີນຢູ່ເຊັ່ນ: ການຖືພາກ່ອນໄວອັນຄວນ ເພາະບໍ່ຮູ້ວິທີປ້ອງກັນ, ການບໍ່ຍອມຮັບເພດທາງເລືອກຂອງສັງຄົມ, ຜູ້ຍິງຖືກເອົາປຽບ ແລະ ອື່ນໆ ໂດຍການຂຽນບົດລະຄອນຂອງໄວໜຸ່ມ InYouth ທັງ18ນ້ອງ. ທັງນີ້ທັງນັ້ນກໍຍັງເປັນການປະຕິບັດຕົວຈິງໄວໜຸ່ມອີກດ້ວຍ ເພາະແຕ່ລະຄົນໄດ້ເລືອກສິ່ງທີ່ໂຕເອງມັກໃນຂະບວນການຜະລິດຮູບເງົາສັ້ນ ແລະ ກໍໄດ້ລົງມືເຮັດວຽກຕົວຈິງກັບທີມງານຜະລິດທີ່ເປັນມືອາຊີບເຊັ່ນ: ບໍລິສັດນາຍມີເດຍຈຳກັດ, ບໍລິສັດລາວນິວເວບຊີນີມາຈຳກັດ.

## 3. ຜົນສຳເລັດຂອງໂຄງການ / Results of the project

- ໄວໜຸ່ມທັງ 18ຄົນ ມີຄວາມຮູ້, ເຂົ້າໃຈຂະບວນການຜະລິດໜັງສັ້ນ ແລະ ວິຊາເສີມຕ່າງໆທີ່ທາງໂຄງການໄດ້ຝຶກໃຫ້ຜ່ານການຮຽນຮູ້ຕົວຈິງຈາກກອງຖ່າຍເປັນເວລາ 28ວັນ ແລະ ຜ່ານການດຳລົງຊີວິດຮ່ວມກັນໃນບ້ານອິນຢູດ.
- ໄວໜຸ່ມ 7ຄົນຖືກຄັດເລືອກໃຫ້ຮ່ວມວຽກນຳບໍລິສັດນາຍມີເດຍຈຳກັດ, ອີກ 2ຄົນຮ່ວມວຽກກັບບໍລິສັດລາວນິວເວບຊີນີມາ ແລະ ອີກ 2ຄົນໄດ້ຮ່ວມວຽກກັບບໍລິສັດເອກະຊົນ.
- ພວກເຂົາລວມກຸ່ມກັນສ້າງເພສຊື່ວ່າ: 3ພາກ (3 Parts) ແລະ ໄດ້ຜະລິດຄຣິບວີດີໂອສັ້ນໆອອກມາເລື້ອຍໆ.
- ຮູບເງົາສັ້ນ "ເຮົາ House the series" ໄດ້ຮັບການຕອບຮັບເປັນຢ່າງດີ ເຊິ່ງສະແດງອອກຈາກຍອດ Like ແລະ share ເພສ

## 4. ປັດໄຈສູ່ຜົນສຳເລັດ / Factors of success

# ຂະບວນການຝຶກອົບຮົມ

- ມີຂະບວນການຄຸ້ມຄອງໄວໜຸ່ມຢ່າງຊັດເຈນເຊັ່ນ: ກົດລະບຽບຢູ່ຮ່ວມກັນໃນບ້ານຫລັງໜຶ່ງ, ຈັດສິດເວນໃນການອອກຕະຫລາດ,ແຕ່ງກິນ, ອະນາໄມ, ປ້ອງກັນ ແລະ ອື່ນໆ.
- ມີຜູ້ຄຸ້ມຄອງໄວໜຸ່ມອາໄສຢູ່ໃນບ້ານອິນຢູດນຳພວກເຂົາ ເພື່ອດູແລຄວາມເປັນລະບຽບຮຽບຮ້ອຍໃນບ້ານ ແລະ ທີ່ສຳຄັນເພື່ອເປັນທີ່ປຶກສາ/ທີ່ເພິ່ງໃຫ້ພວກເຂົາເວລາບໍ່ສະບາຍໃຈ.
- ມີທີ່ປຶກສາທາງດ້ານການຜະລິດ ຄ່ອຍໃຫ້ຄຳແນະນຳ ຫຼື ເປັນພີ່ລ້ຽງໃຫ້ໄວໜຸ່ມຕະຫຼອດການຝຶກອົບຮົມ 1 ປີ
- ຈັດຂະບວນການສອນໃນຮູບແບບເພື່ອນສອນເພື່ອນໃນເວລາຫວ່າງ ແລະ ມີກິດຈະກຳນອກສະຖານທີ່ຢູ່ສະເໝີ

# ຂະບວນການລົງຖ່າຍທຳ

- ຈັດສັນແຕ່ລະຄົນເຮັດວຽກຕາມຕຳແໜ່ງທີ່ຕົນເອງເລືອກ ແລະ ບັນຈຸເຂົ້າເປັນໜຶ່ງໃນທີມງານຖ່າຍທຳຮູບເງົາສັ້ນ "ເຮົາ House the series", ວິທີນີ້ເຮັດໃຫ້ພວກເຂົາເຫັນພາບ, ເຂົ້າໃຈຂະບວນການຕ່າງໆໃນກອງຖ່າຍ ລວມເຖິງປະເຊີນກັບທຸກໆບັນຫາທີ່ເກີດຂຶ້ນ ແລະ ຊ່ວຍກັນແກ້ໄຂຮ່ວມກັບທີມງານ.
- ມີຫົວໜ້າແຕ່ລະທີມງານ ຄ່ອຍໃຫ້ຄຳປຶກສາ ແລະ ຊີ້ແນະໄວໜຸ່ມຢູ່ຕະຫຼອດ.
- ມີການຖອດຖອນບົດຮຽນກັນ, ວາງແຜນກັນທຸກໆຊຸດການຖ່າຍທຳ.
- ມີຜູ້ຄຸ້ມຄອງໄວໜຸ່ມຄ່ອຍຕິດຕາມ ແລະ ໃຫ້ຄຳແນະນຳໃນດ້ານການປະພຶດ, ການວາງໂຕເປັນປະຈຳ.

## 5. ຂໍ້ຈຳກັດທີ່ເຮັດໃຫ້ບໍ່ສຳເລັດຜົນໄດ້ດີ / Limitations

- ຜູ້ປົກຄອງບາງຄົນຍັງມີການຫ່ວງດຶງ ຫຼື ບໍ່ໃຫ້ໂອກາດລູກ ໃຫ້ໄປຮຽນຢູ່ຕ່າງເມືອງທີ່ຫ່າງໄກພໍ່ແມ່ ໂດຍສະເພາະແມ່ນລູກຜູ້ຍິງ.
- ໄວໜຸ່ມສ່ວນຫຼາຍແມ່ນມາຈາກຫຼາຍແຂວງ, ຫຼາຍຊົນເຜົ່າ ສະນັ້ນ, ສຳນຽງ ພາສາປາກເວົ້າ ກໍເປັນສ່ວນໜຶ່ງທີ່ເຮັດໃຫ້ເກີດຄວາມບໍ່ເຂົ້າໃຈເຊິ່ງກັນ ແລະ ກັນ
- ໄລຍະເວລາສັ້ນ ແລະ ບໍ່ເປັນໄປຕາມແຜນ ຍ້ອນການລະບາດຂອງພະຍາດປອດອັກເສບສາຍພັນໃໝ່ COVID-19.
- ສະຖານທີ່ຖ່າຍທຳ ບາງບ່ອນກໍຈຳກັດດ້ານສຽງ, ບາງບ່ອນລູກຄ້າຫຼາຍເຮັດໃຫ້ຖ່າຍທຳບໍ່ສະດວກ
- ເນື້ອໃນຂອງບົດລະຄອນຍັງເຂົ້າບໍ່ເຖິງອາລົມໃນບາງຕອນ ເພາະອີງໃສ່ບໍລະບົດຂອງປະເທດເຮົາທີ່ບໍ່ສາມາດສື່ອາລົມໃຫ້ອອກມາສຸດໄດ້. ເພາະສະນັ້ນ, ການສະແດງໃນບາງຕອນອາດອອກມາບໍ່ດີພໍ.

## 6. ຂໍ້ແນະນຳສຳລັບຜູ້ທີ່ສົນໃຈຢາກທົດລອງນຳໃຊ້ / Recommendations for scaling up

- ຖ້າຈະເຮັດໂຄງການໃນຮູບແບບຝຶກອົບຮົມແບບຄ້າຍພັກແຮມໃນລັກສະນະນີ້ ຄວນມີຜູ້ຄຸ້ມຄອງໄວໜຸ່ມພັກອາໄສຢູ່ເຮືອນນຳພວກເຂົາໄວ້ຄ່ອຍເບິ່ງແຍງຄວາມປອດໄພ, ໃຫ້ຄຳປຶກສາ, ດູແລໃຫ້ກຳລັງໃຈໃນທຸກໆດ້ານ.
- ສ້າງຄວາມເຊື່ອໝັ້ນກັບຄອບຄົວຂອງໄວໜຸ່ມ ແລະ ໝັ້ນປະສານງານກັນຕະຫຼອດ.
- ຈັດຂະບວນການຄຸ້ມຄອງໄວໜຸ່ມໃຫ້ເປັນລະບົບ ແລະ ຫັດກຸມ ໂດຍສະເພາະແມ່ນກົດລະບຽບການຢູ່ຮ່ວມກັນ.
- ຈັດຮູບແບບການຝຶກອົບຮົມແບບບູລະນາການ ແລະ ເພື່ອນສອນເພື່ອນ.




HOUSE the series
House
Supported by:
voice


HOUSE the series
HOUSE the series
voice


HOUSE the series
Supported by:
voice